ສາທາລະນະລັດປະຊາທິປະໄຕປະຊາຊົນລາວ

ສັນຕິພາບເອກະລາດປະຊາທິປະໄຕເອກະພາບວັດທະນະຖາວອນ

ທະນາຄານແຫ່ງ ສປປລາວ

ເລກທີ: 08 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 20 ສິງຫາ 2018

ສຳນັກງານ ຄຄຊ
ຮັບ ເລກ 0863
ວັນທີ 21 AUG 2018
ໂທລະສັບ 021 217770

## ບົດສະຫຼຸບການເຄື່ອນໄຫວວຽກງານຂອງທະນາຄານແຫ່ງ ສປປ ລາວ ປະຈຳເດືອນ ກໍລະກົດ ປີ 2018 ແລະ ທິດທາງແຜນການໃນຕໍ່ໜ້າ

## ພາກທີ I

## ຕີລາຄາສະພາບການເຄື່ອນໄຫວວຽກງານທີ່ພົ້ນເດັ່ນຂອງທະນາຄານໃນໄລຍະຜ່ານມາ

### I.ວຽກງານການເມືອງ-ແນວຄິດ

ໃນໜຶ່ງເດືອນຜ່ານມາ, ສະພາບການເມືອງແນວຄິດຂອງສະມາຊິກພັກ-ພະນັກງານພາຍໃນຂະແໜງທະນາຄານ ມີຄວາມສະຫງົບປົກກະຕິ, ມີຄວາມອຸ່ນອ່ຽນທຸ່ນທ່ຽງ, ມີຄວາມເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ-ລະບຽບວິໄນ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກ ແລະ ເອົາໃຈໃສ່ໃນການປະຕິບັດໜ້າທີ່ການເມືອງຂອງຕົນໄດ້ເປັນຢ່າງດີ ຊຶ່ງສາມາດສະຫຼຸບຕີລາຄາສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ ປະຈຳເດືອນ ກໍລະກົດ 2018 ແລະ ທິດທາງແຜນການໃນເດືອນ ສິງຫາ 2018 ດັ່ງລາຍລະອຽດລຸ່ມນີ້:

### II.ສະພາບການເຄື່ອນໄຫວທີ່ພົ້ນເດັ່ນຂອງ ທຫລ

- ໄດ້ເຂົ້າຮ່ວມກອງປະຊຸມຕ່າງໆ: ກອງປະຊຸມນາຍົກ-ຮອງນາຍົກ ປະຈຳເດືອນ ກໍລະກົດ 2018; ກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນ ກໍລະກົດ 2018; ກອງປະຊຸມປຶກສາຫາລືກ່ຽວກັບການດຸ່ນດ່ຽງແຫຼ່ງທຶນ ເພື່ອປະຕິບັດລາຍຈ່າຍຮີບດ່ວນ ແລະ ມາດຕະການ ການລະດົມແຫຼ່ງທຶນໝູນວຽນລວມຂອງແຜນການປີ 2018; ກອງປະຊຸມປຶກສາຫາລືກ່ຽວກັບທິດທາງໃນການສະໜອງສິນເຊື່ອໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ; ກອງປະຊຸມປຶກສາຫາລືກ່ຽວກັບມາດຕະການແກ້ໄຂໜີ້ສິນໂຄງການລົງທຶນຂອງລັດ ແລະ ສະຫຼຸບການຈັດຕັ້ງປະຕິບັດການອ່າຍໜີ້ 3 ແຈ ປີ 2018; ກອງປະຊຸມເຜີຍແຜ່ແນະນຳການຜັນຂະຫຍາຍຈັດຕັ້ງປະຕິບັດດຳລັດ ເລກທີ 348/ລບ ວ່າດ້ວຍມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ; ກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍລັດຖະບານ; ເຂົ້າຮ່ວມກອງປະຊຸມສອງຝ່າຍ ລະຫວ່າງ ທຫລ ແລະ ທະນາຄານແຫ່ງລັດຫວຽດນາມ ຢູ່ປະເທດ ສສ. ຫວຽດນາມ;
- ສຳເລັດການຈັດກອງປະຊຸມຕ່າງໆ: ກອງປະຊຸມທິດທາງການສະໜອງສິນເຊື່ອໃຫ້ແກ່ວິສາຫະກິດຂະໜາດນ້ອຍ ແລະ ກາງ; ກອງປະຊຸມເປີດກວ້າງຜ່ານຮ່າງແຜນຍຸດທະສາດ ໄອທີ ຂອງ ທຫລ ປະຈຳປີ 2018-2022; ກອງປະຊຸມຮຽບຮຽງຮ່າງກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ); ກອງປະຊຸມຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍທະນາຄານທຸລະກິດ; ກອງປະຊຸມສະພາບໍລິຫານທະນາຄານສົ່ງເສີມກະສິກຳ; ກອງປະຊຸມທົບທວນຄືນຄວາມຄືບໜ້າໃນການຈັດຕັ້ງປະຕິບັດເງື່ອນໄຂອົງການການຄ້າໂລກ (WTO); ກອງປະຊຸມປຶກສາຫາລືວຽກງານການບໍລິການທາງດ້ານການເງິນ digital ຄັ້ງທີ 11; ກອງປະຊຸມປຶກສາຫາລືກ່ຽວກັບຮ່າງຂໍ້ຕົກລົງວ່າດ້ວຍການດຳເນີນທຸລະ

ກິດຜ່ານໂທລະສັບມືຖື; ກອງປະຊຸມສຳມະນາວຽກງານປະກັນໄພເງິນຝາກລະຫວ່າງກອງທຶນປົກປ້ອງຜູ້ຝາກເງິນ ກັບປະກັນໄພເງິນຝາກປະເທດຍີ່ປຸ່ນ;

- ຈັດຕັ້ງ ແລະ ເຂົ້າຮ່ວມພິທີຕ່າງໆ: ຈັດຝຶກອົບຮົມໃນຫົວຂໍ້: "ການຕ້ານການສະໜອງທຶນ ໃຫ້ແກ່ການກໍ່ການຮ້າຍ" ແລະ "ວຽກງານບັນຊີ ແລະ ການເງິນ"; ຈັດຂະບວນການເຕັ້ນເອໂລບິກ ເພື່ອຕ້ອນຮັບວັນສ້າງຕັ້ງສະຫະພັນແມ່ຍິງລາວ ຄົບຮອບ 63 ປີ; ໄປທັດສະນະສຶກສາ ແລະ ທ່ຽວຊົມອະນຸສອນສະຖານ ປະທານ ສຸພານຸວົງ ເພື່ອຂໍານັບຮັບຕ້ອນວັນເກີດປະທານສຸພານຸວົງ ຄົບຮອບ 109ປີ; ເຂົ້າຮ່ວມຂະບວນການຍ່າງເພື່ອສຸຂະພາບ ເນື່ອງໃນໂອກາດສະເຫຼີມສະຫຼອງວັນຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ (MSME Day);

- ສຳເລັດການຕ້ອນຮັບການເຂົ້າຢ້ຽມຢາມພົບປະຄະນະນຳ ທຫລ ຂອງຜູ້ບໍລິຫານສູງສຸດຂອງອົງການການເງິນສາກົນ; ເອກອັກຄະລັດຖະທູດ ອິດສະຕາລີ ປະຈຳ ສປປ ລາວ (ຄົນໃໝ່);

- ສຳເລັດການປະກອບສ່ວນທາງດ້ານວັດຖຸ, ປັດໃຈ ແລະ ສິ່ງຂອງເຄື່ອງໃຊ້ຕ່າງໆ ເພື່ອຊ່ວຍເຫຼືອປະຊາຊົນແຂວງອັດປະຕື ທີ່ໄດ້ຮັບຜົນກະທົບຈາກໄພນ້ຳຖ້ວມ (ໂດຍໄດ້ມອບໃຫ້ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນເງິນຈຳນວນ 1.5 ຕື້ກີບ ແລະ ເປັນສິ່ງຂອງອຸປະໂພກ ແລະ ບໍລິໂພກ ຈຳນວນ 13,4 ລ້ານກີບ).

## III.ສະພາບພົ້ນເດັ່ນການເຄື່ອນໄຫວວຽກງານວິຊາສະເພາະ

ໃນ 1 ເດືອນຜ່ານມາ, ທະນາຄານແຫ່ງ ສປປ ລາວ ໄດ້ເອົາໃຈໃສ່ຕິດຕາມສະພາບເສດຖະກິດສາກົນ; ຕະຫຼາດເງິນຕາພາຍໃນ; ການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ; ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ; ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບຢ່າງເປັນປົກກະຕິ ໂດຍມີສະພາບຄ່ອງດີ ເຊິ່ງສະແດງອອກຄື:

### 1. ສະພາບເສດຖະກິດເງິນຕາສາກົນ

- ໃນເດືອນ 07/2018 ສະພາບເສດຖະກິດໂລກໂດຍລວມສືບຕໍ່ຂະຫຍາຍຕົວຕໍ່ເນື່ອງ ຍ້ອນຄວາມຕ້ອງການດ້ານການລົງທຶນ ແລະ ການບໍລິໂພກສືບຕໍ່ເພີ່ມຂຶ້ນ. ພິເສດສະພາບພົ້ນເດັ່ນໃນເດືອນນີ້ ແມ່ນທະນາຄານກາງ ສ.ອາເມລິກາ ປະກາດປັບຂຶ້ນອັດຕາດອກເບ້ຍນະໂຍບາຍ ບວກກັບບັນຫາການຂາດດຸນງົບປະມານຕໍ່ເນື່ອງໃນບັນດາປະເທດເສດຖະກິດກຳລັງພັດທະນາ-ເສດຖະກິດເກີດໃໝ່, ຈາກປັດໄຈພາຍໃນ ແລະ ພາຍນອກດັ່ງກ່າວໄດ້ສົ່ງຜົນເຮັດໃຫ້ສະພາບລາຄາຮຸ້ນຂອງ ສ.ອາເມລິກາ ປັບຕົວເພີ່ມຂຶ້ນ. ພ້ອມທັງສະກຸນເງິນໂດລາມີທ່າອ່ຽງແຂງຄ່າທຽບໃສ່ຫຼາຍສະກຸນເງິນຫຼັກໃນຕະຫຼາດສາກົນເຊັ່ນ: ແຂງຄ່າຂຶ້ນ 2,94% ທຽບເງິນບາດ, 2,79% ທຽບເງິນປອນ, 1,62% ທຽບເງິນເປໂຊ, 1,56% ທຽບເງິນໂດລາສິງກະໂປ, 1.51% ທຽບເງິນລິງກິດ ແລະ 0,66% ທຽບເງິນເຢນ. ນອກຈາກນັ້ນ, ການປັບຕົວເພີ່ມຂຶ້ນຂອງລາຄາສິນຄ້າໃນຕະຫຼາດໂລກ ອາດຈະສົ່ງຜົນຕໍ່ອັດຕາເງິນເຟີ້ໃຫ້ມີທ່າອ່ຽງເພີ່ມຂຶ້ນ.

- ສຳລັບອັດຕາແລກປ່ຽນ: ເງິນໂດລາແຂງຄ່າຂຶ້ນ 0,88% ທຽບໃສ່ເງິນເອີໂຣ ເນື່ອງຈາກຕົວເລກທາງດ້ານເສດຖະກິດຂອງ ສ.ອາເມລິກາ ອອກມາດີ ເປັນຕົ້ນແມ່ນຕົວເລກດັດຊະນີພາກອຸດສາຫະກຳການຜະລິດຂອງເດືອນ 06/2018 ຢູ່ທີ່ລະດັບ 60.2 ຈຸດ ຈາກລະດັບ 58,7 ຈຸດ ໃນເດືອນຜ່ານມາ ແລະ ຕົວເລກຍອດສັ່ງຊື້ສິນຄ້າຂອງໂຮງງານຂອງເດືອນ 05/2018 ເພີ່ມຂຶ້ນ 0,4% ຈາກຫຼຸດລົງ 0,4% ໃນເດືອນຜ່ານມາ. ພ້ອມກັນນັ້ນ, ຕົວເລກຍອດຂາຍບ້ານໃໝ່ຂອງເດືອນ 05/2018 ເພີ່ມຂຶ້ນ 6,7% ຈາກຫຼຸດລົງ 3,7% ໃນເດືອນຜ່ານມາ.

- ໃນດ້ານລາຄານ້ຳມັນເພີ່ມຂຶ້ນ 1,36% ຈາກ 67,71 ໂດລາ/ບາເຣວ ມາເປັນ 68,63 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນດິບຂອງ ສ.ອາເມລິກາ ຫຼຸດລົງມາຢູ່ໃນລະດັບ 9,89 ລ້ານບາເຣວ. ພ້ອມດຽວກັນນັ້ນ, ລາຄານ້ຳມັນໄດ້ຮັບແຮງກົດດັນຈາກກຳລັງການຜະລິດນ້ຳມັນດິບຂອງປະເທດການາດາ ທີ່ຫຼຸດລົງປະມານ 0,36 ລ້ານບາເຣວ/ວັນ ຍ້ອນການຂັດຂ້ອງຂອງວົງຈອນໄຟຟ້າ ແລະ ຄວາມຕ້ອງການໃຊ້ນ້ຳມັນເພີ່ມຂຶ້ນໃນຊ່ວງລະດູຮ້ອນ. ນອກຈາກນັ້ນ, ສ.ອາເມລິກາ ໄດ້ປະກາດໃຫ້ປະເທດທີ່ເປັນຄູ່ຄ້າກັບປະເທດອີຣ່ານຕ້ອງຢຸດການນຳເຂົ້າມັນດິບຈາກປະເທດອີຣ່ານຢ່າງເດັດຂາດຊຶ່ງເປັນສາເຫດເຮັດໃຫ້ກຳລັງການຜະລິດນ້ຳມັນດິບຂອງປະເທດອີຣ່ານຫຼຸດລົງຫຼາຍກວ່າທີ່ຄາດຄະເນໄວ້. ສ່ວນດ້ານ

ລາຄາຄຳຫຼຸດລົງ 2,75% ຈາກ 1.297,68 ໂດລາ/ອອນ ມາເປັນ 1.261,95 ໂດລາ/ອອນ ເນື່ອງຈາກການແຂງຄ່າຂຶ້ນຂອງເງິນໂດລາ ເຮັດໃຫ້ນັກລົງທຶນເທຂາຍຄຳ ແລະ ສັນຍາຊື້-ຂາຍຄຳເພື່ອເອົາກຳໄລ.

2. <u>ສະພາບເງິນຕາພາຍໃນ</u>

- ອັດຕາເງິນເຟີ້ປະຈຳເດືອນ 07/2018 (ຕົວເລກຄາດຄະເນ) ຢູ່ໃນລະດັບ 2,68% ເພີ່ມຂຶ້ນຈາກ 2,18% ໃນເດືອນ 06/2018. ສາເຫດຕົ້ນຕໍຍ້ອນການປັບຕົວເພີ່ມຂຶ້ນຂອງລາຄາໝວດຄົມມະນາຄົມ ແລະ ການຂົນສົ່ງ.

- ຖານເງິນຕາປະຈຳເດືອນ 07/2018 ຫຼຸດລົງ 48,69 ຕື້ກີບ ຫຼື 0,12% ທຽບໃສ່ເດືອນ 06/2018. ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 3.150,56 ຕື້ກີບ ຫຼື 8,38%. ປະລິມານເງິນ M2 ຫຼຸດລົງ 1.893,26 ຕື້ກີບ ຫຼື -2,30% ທຽບໃສ່ເດືອນ 06/2018, ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 4.991,17 ຕື້ກີບ ຫຼື 6,61%.

- ອັດຕາແລກປ່ຽນທົ່ວລະບົບໃນເດືອນ 07/2018 ທຽບເດືອນ 06/2018 ເໜັງຕີງໃນຂອບທີ່ກຳນົດໄວ້ ຊຶ່ງເຫັນໄດ້ຈາກເງິນກີບອ່ອນຄ່າລົງ 1,06% ທຽບເງິນໂດລາ ແຕ່ແຂງຄ່າຂຶ້ນ 1,37% ທຽບເງິນບາດ. ຖ້າສົມທຽບໃສ່ທ້າຍປີຜ່ານມາເຫັນວ່າເງິນກີບອ່ອນຄ່າລົງ 2,19% ທຽບກັບເງິນໂດລາ ແລະ ອ່ອນຄ່າລົງ 1,71% ທຽບເງິນບາດ.

- ມູນຄ່າການຊື້-ຂາຍເງິນຕາຕ່າງປະເທດປະຈຳເດືອນ 07/2018 (13/06/2018-12/07/2018) ເຫັນວ່າມູນຄ່າການຊື້-ຂາຍເງິນຕາຕ່າງປະເທດຫຼຸດລົງ 0,43% ຖ້າທຽບໃສ່ເດືອນ 06/2018. ທທກ ຂາຍເງິນຕາຕ່າງປະເທດສຸດທິ 31,53 ລ້ານໂດລາທຽບເທົ່າ (ໃນນັ້ນ, ຊື້ເງິນໂດລາສຸດທິ 25,82 ລ້ານໂດລາ ແຕ່ຂາຍເງິນບາດສຸດທິ 1.859,77 ລ້ານບາດ ຫຼື 57,35 ລ້ານໂດລາທຽບເທົ່າ). ນອກນັ້ນ, ເພື່ອດຸ່ນດ່ຽງຕະຫຼາດເງິນຕາຕ່າງປະເທດ ທຫລ ໄດ້ຂາຍເງິນຕາຕ່າງປະເທດໃຫ້ ທທກ ສຸດທິ 63,65 ລ້ານໂດລາ. ປະລິມານການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນ ຈຳນວນ 28,31 ລ້ານໂດລາທຽບເທົ່າ (ໃນນີ້ປະລິມານຊື້-ຂາຍເງິນໂດລາ 16,47 ລ້ານໂດລາ ແລະ ເງິນບາດ 384 ລ້ານບາດ ຫຼື 11,84 ລ້ານໂດລາທຽບເທົ່າ);

- ສະພາບການໄຫຼຂອງກະແສເງິນຜ່ານລະບົບທະນາຄານ ປະຈຳເດືອນ 07/2018 (13/06/2018-12/07/2018) ໄດ້ມີກະແສເງິນໄຫຼອອກຜ່ານລະບົບທະນາຄານສຸດທິ 171,65 ລ້ານໂດລາ. ໃນນັ້ນ, ກະແສເງິນໄຫຼເຂົ້າ ຈຳນວນ 605,6 ລ້ານໂດລາ ຊຶ່ງສ່ວນໃຫຍ່ແມ່ນຮັບຈາກການສົ່ງອອກສິນຄ້າ ຈຳນວນ 283,96 ລ້ານໂດລາ, ຮັບຈາກການກູ້ຢືມຂອງຫົວໜ່ວຍທຸລະກິດຈຳນວນ 139,14 ລ້ານໂດລາ, ຮັບຈາກການບໍລິການ ຈຳນວນ 84,01 ລ້ານໂດລາ ແລະ ຮັບເງິນຈາກການລົງທຶນໂດຍກົງຈາກຕ່າງປະເທດ ຈຳນວນ 62,78 ລ້ານໂດລາ. ສ່ວນກະແສເງິນໄຫຼອອກຜ່ານລະບົບທະນາຄານ ຈຳນວນ 777,26 ລ້ານໂດລາ ຕົ້ນຕໍແມ່ນຊຳລະຄ່ານຳເຂົ້າສິນຄ້າຂອງບັນດາວິສາຫະກິດ ຈຳນວນ 451,36 ລ້ານໂດລາ, ຊຳລະຄ່າບໍລິການ ຈຳນວນ 77,13 ລ້ານໂດລາ, ຊຳລະເງິນກູ້ຂອງຫົວໜ່ວຍທຸລະກິດ ຈຳນວນ 77,13 ລ້ານໂດລາ ແລະ ຊຳລະເງິນກູ້ພາກລັດຖະບານ ຈຳນວນ 60 ລ້ານໂດລາ.

3. <u>ການລະດົມເງິນຝາກ ແລະ ການປ່ອຍສິນເຊື່ອ</u>

- ການລະດົມເງິນຝາກຂອງທະນາຄານທຸລະກິດ: ຮອດວັນທີ 12/07/2018 (ຕົວເລກເບື້ອງຕົ້ນ) ທະນາຄານທຸລະກິດມີຍອດເງິນຝາກທັງໝົດ 69.718,78 ຕື້ກີບ ເມື່ອທຽບໃສ່ເດືອນຜ່ານມາ ຫຼຸດລົງ 2,36% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 6,05%. ເງິນຝາກເປັນເງິນກີບ ຫຼຸດລົງ 0,01% ເມື່ອທຽບໃສ່ເດືອນຜ່ານມາ ຊຶ່ງກວມເອົາ 47,33% ຂອງຍອດເງິນຝາກທັງໝົດ ແລະ ເງິນຝາກເປັນເງິນຕາຕ່າງປະເທດ ຫຼຸດລົງ 4,39% ຊຶ່ງກວມເອົາ 52,67% ຂອງເງິນຝາກທັງໝົດ;

- ການປ່ອຍສິນເຊື່ອຂອງທະນາຄານທຸລະກິດ: ຮອດວັນທີ 12/07/2018 (ຕົວເລກເບື້ອງຕົ້ນ) ຍອດເຫຼືອສິນເຊື່ອທັງໝົດ 67.568,70 ຕື້ກີບ ເພີ່ມຂຶ້ນ 0,57% ເມື່ອທຽບໃສ່ເດືອນຜ່ານມາ. ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 7,30%. ສິນເຊື່ອເປັນເງິນກີບກວມເອົາ 48,14% ຂອງສິນເຊື່ອທັງໝົດ ແລະ ສິນເຊື່ອເປັນເງິນຕາຕ່າງປະເທດກວມເອົາ 51,86% ຂອງສິນເຊື່ອທັງໝົດ;

– ທະນາຄານນະໂຍບາຍປ່ອຍສິນເຊື່ອທັງໝົດໃນເດືອນ 07/2018 ຈານວນ 13,95 ຕື້ກີບ ທຽບໃສ່ເດືອນຜ່ານມາ ຫຼຸດລົງ 0,86%, ເກັບຕົ້ນທຶນໄດ້ 26,15 ຕື້ກີບ ທຽບໃສ່ເດືອນຜ່ານມາ ເພີ່ມຂຶ້ນ 16,06% (ສິນເຊື່ອທັງໝົດທີ່ປ່ອຍໄປສ່ວນໃຫຍ່ແມ່ນໄດ້ສຸມໃສ່ຂະແໜງກະສິກຳ-ປ່າໄມ້, ການຄ້າ ແລະ ປະກອບວັດຖຸເຕັກນິກ). ຍອດສິນເຊື່ອຮອດທ້າຍເດືອນ 07/2018 ມີຈຳນວນ 3.083,60 ຕື້ກີບ ເທົ່າກັບ 98,17% ຂອງແຜນການ (3.140,93 ຕື້ກີບ). ໃນນີ້ສິນເຊື່ອຢູ່ເມືອງເປົ້າໝາຍ 2.050,37 ຕື້ກີບ, ຈຸດສຸມລັດຖະບານ-ທ້ອງຖິ່ນ 321,59 ຕື້ກີບ, ບ້ານເຮັດທົດລອງ 3 ສ້າງ 282,20 ຕື້ກີບ ແລະ ໂຄງການຜະລິດເປັນສິນຄ້າ 429,44 ຕື້ກີບ.

## 4. ການເຄື່ອນໄຫວຊຳລະສະສາງ ແລະ ການຊື້-ຂາຍພັນທະບັດ

### 4.1. ການເຄື່ອນໄຫວຊຳລະສະສາງ

ການຊຳລະສະສາງດ້ວຍແຊັກຜ່ານສູນຊຳລະສະສາງໃນເດືອນນີ້ມີ ຈຳນວນ 3.008 ສະບັບ ຫຼຸດລົງ 16,49% ເປັນເງິນ ຈຳນວນ 1.545,73 ຕື້ກີບ ຫຼຸດລົງ 4,09% ເມື່ອທຽບໃສ່ເດືອນຜ່ານມາ. ການໂອນເງິນທາງໂທລະສານແບບມີມູນຄ່າສູງໃນເດືອນນີ້ມີ ຈຳນວນ 172 ຄັ້ງ ຫຼຸດລົງ 2,27% ເມື່ອທຽບໃສ່ເດືອນຜ່ານມາ, ມີມູນຄ່າການໂອນ 802,89 ຕື້ກີບ ຫຼຸດລົງ 5,51% ເມື່ອທຽບໃສ່ເດືອນຜ່ານມາ; ສຳລັບການໂອນເງິນຜ່ານລະບົບຊຳລະສະສາງມູນຄ່າສູງ (RTGS) ແຕ່ວັນທີ 25/06-24/07/2018 ມີຈຳນວນ 16.003 ຄັ້ງ ລາຍລະອຽດມີດັ່ງນີ້:

– **ສະກຸນເງິນກີບ:** ມີການເຄື່ອນໄຫວຈຳນວນ 15.718 ຄັ້ງ ມີມູນຄ່າການໂອນ 3.754,40 ຕື້ກີບ ຫຼຸດລົງ 2,70% ເມື່ອທຽບໃສ່ເດືອນຜ່ານມາ. ໃນນີ້, ທະນາຄານການຄ້າຕ່າງປະເທດລາວມະຫາຊົນເຮັດທຸລະກຳຫຼາຍກວ່າໝູ່ ຈຳນວນ 4.968 ຄັ້ງ. ໃນນັ້ນມີ 42 ພາກສ່ວນທີ່ເຮັດທຸລະກຳ (ທະນາຄານທຸລະກິດ 38 ແຫ່ງ, ຕະຫຼາດຫຼັກຊັບ, LAPS, BCONEX ແລະ ກະຊວງການເງິນ);

– **ກະຊວງການເງິນ:** ມີການເຄື່ອນໄຫວຈຳນວນ 285 ຄັ້ງ ມີມູນຄ່າການໂອນ 448,55 ຕື້ກີບ ເພີ່ມຂຶ້ນ 75,19% ທຽບໃສ່ເດືອນຜ່ານມາ.

### 4.2ການຊື້-ຂາຍພັນທະບັດ

– ໃນເດືອນ 07/2018 ພັນທະບັດກະຊວງການເງິນໄດ້ມີການຈຳໜ່າຍພັນທະບັດບ້ວງລະດົມທຶນຜ່ານ ທຫລ ຈຳນວນ 110 ຕື້ກີບ. ໃນນັ້ນ, ຈຳໜ່າຍໃຫ້ທະນາຄານອຸດສາຫະກຳ ແລະ ການຄ້າ ສປ. ຈີນ ຈຳນວນ 80 ຕື້ກີບ, ຫ້ອງການກອງທຶນປະກັນສັງຄົມ (ພາກວິສາຫະກິດ) ຈຳນວນ 10 ຕື້ກີບ, ຫ້ອງການກອງທຶນປະກັນສັງຄົມ (ພາກລັດຖະກອນ) ຈຳນວນ 10 ຕື້ກີບ, ກອງທຶນປົກປ້ອງຜູ້ຝາກເງິນ ຈຳນວນ 10 ຕື້ກີບ ແລະ ໄຖ່ຖອນພັນທະບັດ ຈຳນວນ 185 ຕື້ກີບ. ໃນນັ້ນ, ໄຖ່ຖອນທະນະບັດບ້ວງລ້າງໜີ້ໃຫ້ບໍລິສັດກໍ່ສ້າງໂຄງການລົງທຶນຂອງລັດ ຈຳນວນ 90 ຕື້ກີບ ຊຶ່ງມີທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຈຳນວນ 34 ຕື້ກີບ, ທະນາຄານພັດທະນາລາວ ຈຳນວນ 15 ຕື້ກີບ, ທະນາຄານສົ່ງເສີມກະສິກຳ ຈຳນວນ 41 ຕື້ກີບ ແລະ ໄຖ່ຖອນພັນທະບັດບ້ວງລະດົມທຶນ ຈຳໜ່າຍຜ່ານ ທຫລ ຈຳນວນ 95 ຕື້ກີບ ຊຶ່ງມີທະນາຄານອຸດສາຫະກຳ ແລະ ການຄ້າ ສປ. ຈີນ ຈຳນວນ 80 ຕື້ກີບ, ຫ້ອງການກອງທຶນປະກັນສັງຄົມ (ພາກລັດຖະກອນ) ຈຳນບ 10 ຕື້ກີບ ແລະ ຫ້ອງການກອງທຶນປະກັນສັງຄົມ (ພາກວິສາຫະກິດ) ຈຳນວນ 5 ຕື້ກີບ;

– ພັນທະບັດຂອງກະຊວງການເງິນມີຍອດເຫຼືອທັງໝົດ 3 ບ້ວງ ມູນຄ່າ 5.593,20 ຕື້ກີບ ແລະ 65 ລ້ານໂດລາ (ບ້ວງລະດົມທຶນ ທທກ ໂດຍກົງ 24 ຕື້ກີບ ແລະ 65 ລ້ານໂດລາ, ພັນທະບັດບ້ວງລ້າງໜີ້ 2.573 ຕື້ກີບ, ບ້ວງລະດົມທຶນຈາກ ທທກ ປະມູນຜ່ານ ທຫລ 2.996,20 ຕື້ກີບ);

– ສຳລັບພັນທະບັດທະນາຄານແຫ່ງ ສປປ ລາວ ໃນເດືອນ 07/2018 ບໍ່ມີການຈຳໜ່າຍ, ປັດຈຸບັນຍັງມີຍອດເຫຼືອພັນທະບັດບໍ່ທັນໄຖ່ຖອນທັງໝົດ 404 ລ້ານໂດລາສະຫະລັດ.

## 5. ການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ

ດັດຊະນີຕະຫຼາດຫຼັກຊັບລາວໃນເດືອນນີ້ປິດຢູ່ທີ່ 907,93 ຈຸດ ຫຼຸດລົງ ເພີ່ມຂຶ້ນ 0,40% ເມື່ອທຽບໃສ່ເດືອນຜ່ານມາ ແລະ ຫຼຸດລົງ 9,06% ເມື່ອທຽບໃສ່ດັດຊະນີທ້າຍປີຜ່ານມາ, ຕະຫຼອດເດືອນມີປະລິມານຊື້-ຂາຍຮຸ້ນທັງໝົດ 893.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4,39 ຕື້ກວ່າກີບ ຫຼຸດລົງ 62,88% ທຽບໃສ່ເດືອນຜ່ານມາ, ໂດຍເປັນຜູ້ລົງທຶນຕ່າງປະເທດ ຊື້-ຂາຍສະເລ່ຍກວມເອົາ 53,15% ຂອງມູນຄ່າການຊື້-ຂາຍທັງໝົດ. ສາເຫດເພີ່ມຂຶ້ນຂອງດັດຊະນີ ຕລຊລ ແມ່ນຍ້ອນການປັບຕົວເພີ່ມຂຶ້ນຂອງລາຄາຮຸ້ນ EDL-Gen ແລະ BCEL ກວມເອົາ 90,33% ຂອງມູນຄ່າການຊື້-ຂາຍທັງໝົດໃນເດືອນນີ້.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວມະຫາຊົນ (BCEL) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 5.450 ກີບ/ຮຸ້ນ ເພີ່ມຂຶ້ນ 50 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 620.900 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 3,35 ຕື້ກວ່າກີບ ຫຼຸດລົງ 43,41% ເມື່ອທຽບໃສ່ເດືອນຜ່ານມາ;

- ຮຸ້ນຂອງບໍລິສັດຜະລິດໄຟຟ້າລາວມະຫາຊົນ (EDL-Gen) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 4.400 ກີບ/ຮຸ້ນ ເພີ່ມຂຶ້ນ 50 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 222.900 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 0,96 ຕື້ກວ່າກີບ ຫຼຸດລົງ 83,30% ເມື່ອທຽບໃສ່ເດືອນຜ່ານມາ;
- ຮຸ້ນຂອງບໍລິສັດລາວເວີນມະຫາຊົນ (LWPC) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 8.500 ກີບ/ຮຸ້ນ ຫຼຸດລົງ 150 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ ແລະ ມີປະລິມານຊື້-ຂາຍທັງໝົດ 200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,76 ລ້ານກວ່າກີບ ຫຼຸດລົງ 93,11% ເມື່ອທຽບໃສ່ເດືອນຜ່ານມາ;
- ຮຸ້ນຂອງບໍລິສັດປີໂຕຣລ້ຽມເທຣດດິ້ງລາວມະຫາຊົນ (PTL) ມີລາຄາຊື້-ຂາຍປິດຕົວຢູ່ທີ່ລະດັບເກົ່າຄື: 1.600 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1.700 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,78 ລ້ານກວ່າກີບ ຫຼຸດລົງ 76,16% ທຽບໃສ່ເດືອນຜ່ານມາ;
- ຮຸ້ນຂອງບໍລິສັດສຸວັນນີໂຮມເຊັນເຕີມະຫາຊົນ (SVN) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 2.600 ກີບ/ຮຸ້ນ ຫຼຸດລົງ 250 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນຜ່ານມາ ແລະ ມີປະລິມານຊື້-ຂາຍທັງໝົດ 4.100 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 11 ລ້ານກວ່າກີບ ເພີ່ມຂຶ້ນ 83,79% ທຽບໃສ່ເດືອນຜ່ານມາ;
- ຮຸ້ນຂອງບໍລິສັດພູສີກໍ່ສ້າງມະຫາຊົນ (PCD) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 1.200 ກີບ/ຮຸ້ນ ຫຼຸດລົງ 100 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 28.900 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 31,33 ລ້ານກີບ ເພີ່ມຂຶ້ນ 49,43% ເມື່ອທຽບໃສ່ເດືອນຜ່ານມາ;
- ຮຸ້ນຂອງບໍລິສັດຊີມັງລາວ (LCC) ມີລາຄາຊື້-ຂາຍປິດຕົວຢູ່ລະດັບ 2.100 ກີບ/ຮຸ້ນ ຫຼຸດລົງ 150 ກີບ/ຮຸ້ນ ເມື່ອທຽບໃສ່ເດືອນທີ່ຜ່ານມາ. ມີປະລິມານຊື້-ຂາຍທັງໝົດ 14.300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 30,25 ລ້ານກີບ ຫຼຸດລົງ 62,45% ເມື່ອທຽບໃສ່ເດືອນຜ່ານມາ.

## 6. ວຽກງານອື່ນໆ

- ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນເຂົ້າ ສປປ ລາວ ຈຳນວນ 147,26 ລ້ານໂດລາທຽບເທົ່າ, ຫຼຸດລົງ 42% ທຽບໃສ່ເດືອນຜ່ານມາ. ໃນນັ້ນ, ມີເງິນໂດລາສະຫະລັດ ຈຳນວນ 128,51 ລ້ານໂດລາ ກວມເອົາ 87% ຂອງເງິນທັງໝົດ, ເງິນບາດ ຈຳນວນ 574 ລ້ານບາດ ແລະ ເງິນປອນ ຈຳນວນ 6 ລ້ານປອນ. ການນຳເຂົ້າແມ່ນເພື່ອຮອງຮັບ ແລະ ລໍຖ້າການຊຳລະສະສາງໃຫ້ກັບບັນດາຫົວໜ່ວຍວິສາຫະກິດ. ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 198,11 ລ້ານໂດລາທຽບເທົ່າ, ຫຼຸດລົງ 19% ທຽບໃສ່ເດືອນຜ່ານມາ. ໃນນັ້ນ, ມີເງິນໂດລາ ຈຳນວນ 152,72 ລ້ານໂດລາ ກວມເອົາ 77% ຂອງເງິນທັງໝົດ, ເງິນບາດ ຈຳນວນ 1,45 ຕື້ບາດ, ເງິນເອີໂຣ ຈຳນວນ 23.695 ເອີໂຣ, ເງິນຝຣັ່ງ ຈຳນວນ 5.160 ຝຣັ່ງສະວິດ, ເງິນອັງກິດ ຈຳນວນ 1.985 ປອນສະເຕີລິງ, ເງິນຍີ່ປຸ່ນ ຈຳນວນ 15,90 ລ້ານເຢັນ, ເງິນການາດາ ຈຳນວນ 25.780 ໂດລາການາດາ, ເງິນອົດສະຕາລີ ຈຳນວນ 46.785 ໂດລາ

ອົດສະຕາລີ, ເງິນສິງກະໂປ ຈຳນວນ 16.090 ໂດລາສິງກະໂປ, ເງິນນິວຊີແລນ ຈຳນວນ 50 ໂດລານິວຊີແລນ ແລະ ເງິນຮົງກົງ ຈຳນວນ 20.000 ໂດລາຮົງກົງ. ຈຸດປະສົງຂອງການນຳເງິນອອກ ແມ່ນເພື່ອລໍຖ້າການຊຳລະສະສາງໃຫ້ກັບບັນດາຫົວໜ່ວຍວິສາຫະກິດ, ສ່ວນໜຶ່ງເປັນເງິນໃບນ້ອຍ, ເກົ່າ ບໍ່ສາມາດເບີກຈ່າຍໃນ ສປປ ລາວ ໄດ້, ສ່ວນເງິນສະກຸນອື່ນນຳອອກ ເພື່ອເຂົ້າບັນຊີເງິນຝາກລໍຖ້າການຊຳລະຄ່າສິນຄ້າ ແລະ ບໍລິການ;

- ວຽກງານຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນ: ສຳເລັດການລົງກວດກາປະຈຳປີ 2017 ຫາໄຕມາດ I ປີ 2018 ຈຳນວນ 2 ທະນາຄານ; ສຳເລັດການສ້າງແບບຟອມລາຍງານການປະເມີນຊ່ອງວ່າງໃຫ້ແກ່ກຸ່ມເປົ້າໝາຍທະນາຄານທຸລະກິດ (ສຳລັບວຽກງານຫັນການຄຸ້ມຄອງຕາມຫຼັກການບາເຊວ 2); ສຳເລັດການມອບ-ຮັບໃບອະນຸຍາດດຳເນີນທຸລະກິດຖາວອນໃຫ້ແກ່ 2 ສະຖາບັນການເງິນຄື: ສກຈບ ເມືອງລາວ ແລະ ສກຈບ ຄຳພູວົງຊັບ; ສຳເລັດການກວດກາປະຈຳປີ 2017-2018 ສະຖາບັນການເງິນຈຸລະພາກທີ່ຮັບເງິນຝາກ ຈຳນວນ 4 ແຫ່ງ (ນະຄອນຫຼວງ, ນິວຄອນເຊັບ, ປະຕູຄຳ ແລະ ເພື່ອການລົງທຶນ ແລະ ການພັດທະນາ); ພ້ອມທັງສຳເລັດການລົງກວດກາຄືນ ການເຄື່ອນໄຫວດຳເນີນທຸລະກິດຂອງ ສກຈຮ ໂຊກໄຊ; ສຳເລັດການໂຈະການດຳເນີນກິດຈະການຊົ່ວຄາວ ຂອງໂຮງຊວດຈຳ ຈິງເຊີນ;

– ສຳເລັດການຮັບຮອງນິຕິກຳຕ່າງໆຄື: ຂໍ້ຕົກລົງວ່າດ້ວຍການຍົກເລີກຂໍ້ຕົກລົງວ່າດ້ວຍ ການສະໜອງສິນເຊື່ອເປັນເງິນຕາຕ່າງປະເທດຂອງທະນາຄານທຸລະກິດ; ຂໍ້ຕົກລົງວ່າເງິນແຮຝາກບັງຄັບ ແລະ ຂໍ້ຕົກລົງວ່າດ້ວຍການປັບປຸງຫຼັກການຮັກສາລະດັບເງິນແຮຝາກບັງຄັບ.

## ພາກທີ II
## ວຽກງານຈຸດສຸມໃນເດືອນຕໍ່ໄປ

– ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນດັ່ງທີ່ໄດ້ກຳນົດໄວ້ໃນແຜນງານປະຈຳປີເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ, ຄວບຄຸມປະລິມານເງິນ ແລະ ຮັບປະກັນລະບົບການຊຳລະສະສາງໃຫ້ຄ່ອງຕົວ, ຕິດຕາມ ແລະ ກວດກາການເຄື່ອນໄຫວຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ເພື່ອຮັບປະກັນສະຖຽນລະພາບທາງດ້ານການເງິນ, ຊຸກຍູ້ການເຄື່ອນໄຫວຕະຫຼາດລະຫວ່າງທະນາຄານ; ສືບຕໍ່ຕິດຕາມສະພາບອັດຕາເງິນເຟີ້ ແລະ ອັດຕາແລກປ່ຽນໃຫ້ຢູ່ໃນຂອບເຂດທີ່ກຳນົດໄວ້, ຄວບຄຸມປັດໄຈຕ່າງໆທີ່ຈະກະທົບໃຫ້ເກີດເງິນເຟີ້; ເອົາໃຈໃສ່ບໍລິຫານຄັງສຳຮອງເງິນຕາຕ່າງປະເທດໃຫ້ໄດ້ຕາມແຜນທີ່ກຳນົດໄວ້;

– ສືບຕໍ່ຄຸ້ມຄອງເງິນຕາຕ່າງປະເທດ, ສົ່ງເສີມການນຳໃຊ້ເງິນກີບ ແລະ ການຊຳລະໂດຍບໍ່ໃຊ້ເງິນສົດ, ເກັບກຳສະພາບການຕິດລາຄາສິນຄ້າ ແລະ ບໍລິການຂອງບັນດາຕະຫຼາດ, ຫ້າງຮ້ານພາຍໃນນະຄອນຫຼວງວຽງຈັນ;

– ຊຸກຍູ້ບັນດາທະນາຄານທຸລະກິດເພີ່ມທະວີການລະດົມເງິນຝາກດ້ວຍຫຼາຍຮູບ, ຫຼາຍສີ ໂດຍສະເພາະເງິນຝາກໄລຍະຍາວທີ່ເໝາະສົມສອດຄ່ອງກັບຄວາມຕ້ອງການຕົວຈິງຂອງສັງຄົມ ໄປຄຽງຄູ່ກັບການປັບປຸງການບໍລິການຂອງຕົນໃຫ້ມີຄວາມສະດວກວ່ອງໄວ ແລະ ທັນໄປສູ່ຄວາມເປັນທັນສະໄໝເທື່ອລະກ້າວ. ກຳນົດອັດຕາດອກເບ້ຍໃຫ້ສອດຄ່ອງກັບສະພາບການພາຍໃນ ແລະ ສາກົນ. ຕິດຕາມການປ່ອຍສິນເຊື່ອຢ່າງໃກ້ຊິດ ແລະ ການປັບປຸງໂຄງສ້າງໜີ້ໃຫ້ແທດເໝາະ ເພື່ອຮັບປະກັນບໍ່ໃຫ້ເກີດໜີ້ເສຍເກີນ 3%;

– ສືບຕໍ່ປັບປຸງນິຕິກຳຈຳນວນໜຶ່ງເປັນຕົ້ນ: ກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ); ກົດໝາຍວ່າດ້ວຍຫຼັກຊັບ; ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງລະບົບເອບໄຊທີໃໝ່ຂອງ ທຫລ; ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງລະບົບໂປຣແກຣມລະບົບບໍລິຫານຂໍ້ມູນທາງການເງິນຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນ (MIS); ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງລະບົບໂປຣແກຣມບັນຊີຂອງ ທຫລ (Core Banking); ຂໍ້ຕົກລົງວ່າດ້ວຍຄ່າທຳນຽມບໍລິການໂອນເງິນຂ້າມທະນາຄານທີ່ຕູ້ຝາກ-ຖອນເງິນ ຜ່ານລະບົບ LAPS; ຮ່າງດຳລັດວ່າດ້ວຍຂໍ້ມູນຂ່າວສານສິນເຊື່ອ; ແລະ ກົດໝາຍວ່າດ້ວຍສະຫະກອນຜະລິດກະສິກຳ;

– ສືບຕໍ່ກະກຽມຮອບດ້ານສຳລັບການສະເຫຼີມສະຫຼອງວັນສ້າງຕັ້ງ ທະນາຄານແຫ່ງ ສປປ ລາວ ຄົບຮອບ 50 ປີ;

- ສືບຕໍ່ກະກຽມຈັດ ແລະ ເຂົ້າຮ່ວມກອງປະຊຸມຕ່າງໆ ຄື: ❶ກອງປະຊຸມສະພາບໍລິຫານທະນາຄານແຫ່ງ ສປປ ລາວ ຄັ້ງທີ I ປະຈໍາປີ 2018; ❷ກອງປະຊຸມສະພາບໍລິຫານສະຖາບັນການທະນາຄານ ຄັ້ງທີ II ປະຈໍາປີ 2018; ❸ກອງປະຊຸມຂັ້ນນໍາເພື່ອປຶກສາຫາລືການປະຕິບັດກົດໝາຍວ່າດ້ວຍການຕ້ານ ສະກັດກັ້ນການຟອກເງິນ ແລະ ສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ແລະ ❹ກອງປະຊຸມທາບທາມຄໍາເຫັນເປີດກວ້າງ ຕໍ່ຮ່າງກົດໝາຍວ່າດ້ວຍທະນາຄານທຸລະກິດ;
- ສືບຕໍ່ວຽກງານປ້ອງກັນເວນຍາມຮັກສາຄວາມປອດໄພອາຄານສໍານັກງານໃຫ້ມີຄວາມສະຫງົບປອດໄພ.

ຜູ້ວ່າການທະນາຄານແຫ່ງ ສປປ ລາວ

ສົມພາວ ໄຟສິດ

ສົ່ງ:
- ຄະນະຜູ້ວ່າການ ທຫລ
- ຜູ້ຊ່ວຍຜູ້ວ່າການ ທຫລ
- ຫ້ອງວ່າການສູນກາງພັກ
- ກົມຄົ້ນຄວ້າສັງລວມ, ສໍານັກງານປະທານປະເທດ
- ກົມຄົ້ນຄວ້າ-ສັງລວມ, ຫສນຍ
- ຫ້ອງການກະຊວງແຜນການ ແລະການລົງທຶນ
- ຫ້ອງການກະຊວງການເງິນ
- ຄະນະກໍາມະທິການແຜນການການເງິນແລະການກວດສອບສະພາແຫ່ງຊາດ.
- ບັນດາກົມ ແລະທຽບເທົ່າກົມພາຍໃນທຫລ
- ຄະນະຫ້ອງການທຫລ.
- ສໍາເນົາ